ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LALCO
LAO ASEAN LEASING PUBLIC COMPANY

===== 000 =====

ເລກທີ.....7974.....

ນະຄອນຫຼວງວຽງຈັນ, ວັນທີ: 02 ກັນຍາ 2022

ຮຽນ: - ທ່ານ ຫົວໜ້າ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອໍານວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ເປີດເຜີຍຂໍ້ມູນກ່ຽວກັບການຈ່າຍເງິນປັນຜົນຂອງ ລອຊ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;
- ອີງຕາມໜັງສືຈາກ ຕລຊລ ເລກທີ 949 ວັນທີ 29 ສິງຫາ 2022 ແລະ ເລກທີ 957 ລົງວັນທີ 31 ສິງຫາ 2022.

ບໍລິສັດລາວອາຊຽນເຊົ່າສິນເຊື່ອມະຫາຊົນ ຂໍລາຍງານຂໍ້ມູນກ່ຽວກັບການຈ່າຍເງິນປັນຜົນມາຍັງທ່ານດັ່ງນີ້:

1. ບໍລິສັດໄດ້ພິຈາລະນາແລ້ວ ແລະ ສະເໜີການຈ່າຍເງິນປັນຜົນເປັນປະຈໍາເດືອນ.
2. ການຈ່າຍເງິນປັນຜົນແມ່ນຈະແບ່ງຈ່າຍເປັນຫຼາຍຄັ້ງເນື່ອງຈາກກໍາໄລສະສົມເປັນຈໍານວນຫຼາຍ, ສໍາລັບລາຍລະອຽດກ່ຽວກັບການຈ່າຍເງິນປັນຜົນ ເຊັ່ນ: ຈ່າຍເປັນຈໍານວນຈັກງວດ, ອັດຕາປັນຜົນ, ມູນຄ່າໃນແຕ່ລະງວດ, ໄລຍະເວລາທີ່ໃຊ້ຈ່າຍແຕ່ງວດທໍາອິດເຖິງງວດສຸດທ້າຍ, ແຜນກໍານົດມື້ປິດປຶ້ມ ແລະ ມື້ກໍານົດຈ່າຍເງິນປັນຜົນຕ່າງໆນັ້ນ ບໍລິສັດຈະແຈ້ງເປັນລາຍຫຼັກສອນໃຫ້ຕະຫຼາດຫຼັກຊັບໃນແຕ່ລະຄັ້ງ ຫຼັງຈາກທີ່ໄດ້ຮັບການອະນຸມັດຈາກກອງປະຊຸມສະພາບໍລິຫານ.
3. ການຈ່າຍເງິນປັນຜົນດັ່ງກ່າວແມ່ນອນວ່າຈະບໍ່ໃຫ້ມີຜົນກະທົບດ້ານລົບຕໍ່ທຸລະກິດ ໂດຍບໍລິສັດຈະພິຈາລະນາການຈ່າຍເງິນປັນຜົນອີງໃສ່ກະແສເງິນແຕ່ລະເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ.

ສະມາຊິກສະພາບໍລິຫານ/ ຜູ້ອໍານວຍການໃຫຍ່

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY ແຂວງ ນະຄອນ ຫຼວງ

ທ່ານ ຊິນໂກ ຢາມາມາ